ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍ່ແກ້ວ

ເຈົ້າແຂວງ

ເລກທີ...໘໔໒../ຈຂ.ບກ

ບໍ່ແກ້ວ, ວັນທີ໒໒...ສິງຫາ...໒໐໑໗

# ຂໍ້ຕົກລົງ
## ວ່າດ້ວຍການຄຸ້ມຄອງຕົວເມືອງຫ້ວຍຊາຍ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງເລກທີ 68/ສພຊ, ລົງວັນທີ 14/12/2015;
- ອີງຕາມ ກົດໝາຍວ່າດ້ວຍຜັງເມືອງ ສະບັບເລກທີ 03/ສພຊ, ລົງວັນທີ 03 ເມສາ1999;
- ອີງຕາມ ກົດໝາຍວ່າດ້ວຍການກໍ່ສ້າງ ສະບັບເລກທີ 05/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແຫ່ງ ສປປ ລາວ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ດຳລັດສຳນັກງານນາຍົກລັດຖະມົນຕີ ວ່າດ້ວຍການປັບໄໝ ແລະ ມາດຕະການຕ່າງໆຕໍ່ຜູ້ລະເມີດລະບຽບ, ກົດໝາຍກ່ຽວກັບການຈາລະຈອນທາງບົກ, ການຂົນສົ່ງທາງບົກ ແລະ ການປົກປັກຮັກສາທາງຫຼວງ ສະບັບເລກທີ 188/ນຍ, ລົງວັນທີ 3 ກໍລະກົດ 2007.

## ເຈົ້າແຂວງ ແຂວງບໍ່ແກ້ວອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງຕົວເມືອງຫ້ວຍຊາຍ ເພື່ອພັດທະນາຕົວເມືອງໃຫ້ສອດຄ່ອງກັບແຜນຜັງເມືອງ, ກົດໝາຍ ແລະ ລະບຽບການ, ເຮັດໃຫ້ຕົວເມືອງຫ້ວຍຊາຍໄດ້ຮັບການພັດທະນາຢ່າງຮອບດ້ານ, ສ້າງຕົວເມືອງຫ້ວຍຊາຍໃຫ້ເປັນໃຈກາງທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ໃຫ້ກາຍເປັນເມືອງທ່ອງທ່ຽວ ແນໃສ່ຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ປອດໄພ, ເປັນລະບຽບຮຽບຮ້ອຍ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາແຂວງບໍ່ແກ້ວ.

**ມາດຕາ 2 ການຄຸ້ມຄອງຕົວເມືອງຫ້ວຍຊາຍ**

**ຕົວເມືອງຫ້ວຍຊາຍ** ແມ່ນເມືອງເທດສະບານຂອງແຂວງບໍ່ແກ້ວ, ຕັ້ງຢູ່ໃຈກາງເທດສະ

ບານແຂວງ, ເປັນສູນກາງທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມຂອງແຂວງ;

**ການຄຸ້ມຄອງຕົວເມືອງຫ້ວຍຊາຍ** ແມ່ນການກຳນົດລະບຽບການຄຸ້ມຄອງຕົວເມືອງພາຍໃຕ້ກົດໝາຍ, ເພື່ອປົກປັກຮັກສາຕົວເມືອງໃຫ້ມີຄວາມສະອາດບໍລິສຸກ, ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມປອດໄພທາງດ້ານສັງຄົມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ການບໍລິຫານຕົວເມືອງ** ໝາຍເຖິງ ການຈັດລະບຽບ ແລະ ການບໍລິຫານຕົວເມືອງພາຍໃຕ້ລະບຽບກົດໝາຍ, ແນ່ໃສ່ພັດທະນາຕົວເມືອງຢ່າງມີແຜນການ ແລະ ສ້າງຕົວເມືອງໃຫ້ມີຄວາມສີວິໄລ;

**2. ການປຸກສ້າງ** ໝາຍເຖິງ ຂະບວນການຈັດຕັ້ງປະຕິບັດບັນດາກິດຈະການປຸກສ້າງ, ການສ້າງ ແລະ ສ້ອມແປງ ໂດຍເລີ່ມຈາກການສຶກສາຄວາມເປັນໄປໄດ້, ການສຳຫຼວດ, ອອກແບບໂຄງການກໍ່ສ້າງ, ການປະກອບ ແລະ ການຕິດຕັ້ງຈົນກ້າວໄປເຖິງການສຳເລັດສິ່ງກໍ່ສ້າງ;

**3. ການຕໍ່ເຕີມ** ໝາຍເຖິງ ການຂະຫຍາຍເນື້ອທີ່ ແລະ ບໍລິມາດຂອງສິ່ງກໍ່ສ້າງ;

**4. ການອະນຸຍາດປຸກສ້າງ** ໝາຍເຖິງ ການພິຈາລະນາຕາມກົດໝາຍ, ລະບຽບການ ຖ້າເຫັນວ່າເອກະສານຂໍອະນຸຍາດປຸກສ້າງຖືກຕ້ອງຕາມເງື່ອນໄຂແລ້ວ ຂະແໜງການດັ່ງກ່າວກໍອອກໃບອະນຸຍາດປຸກສ້າງ ຕາມລັກສະນະການກໍ່ສ້າງທີ່ໄດ້ຮ້ອງຂໍພາຍໃນກຳນົດເວລາຕາມທີ່ໄດ້ກຳນົດໄວ້;

**5. ເຂດສະຫງວນ** ໝາຍເຖິງ ຂອບເຂດພື້ນທີ່ ທີ່ສະຫງວນໄວ້ເພື່ອຂະຫຍາຍກິດຈະການໃດໜຶ່ງ;

**6. ເຂດຂຽວ** ໝາຍເຖິງ ພື້ນທີ່ທີ່ຜັງເມືອງໄດ້ກຳນົດຢູ່ໃນແຜນຜັງຈັດສັນຕົວເມືອງ ເພື່ອຮັກສາສະພາບແວດລ້ອມ ເຊັ່ນ ສວນສາທາລະນະ, ຂອບເຂດສະຫງວນແຄມແມ່ນ້ຳຂອງ, ແຄມຫ້ວຍ;

**7. ສິ່ງແວດລ້ອມ** ໝາຍເຖິງ ຊັບພະສິ່ງທັງປວງທີ່ມີຊີວິດ ແລະ ບໍ່ມີຊີວິດ ຊຶ່ງເກີດຂຶ້ນຕາມທຳມະຊາດ ຫຼື ມະນຸດສ້າງຂຶ້ນທີ່ຢູ່ອ້ອມເປົ້າໝາຍໃດໜຶ່ງ ເຊັ່ນ ຄົນ, ສັດ, ພືດ ແລະ ອື່ນທີ່ມີສາຍກ່ຽວພັນ, ສົ່ງຜົນສະທ້ອນຊຶ່ງກັນ ແລະ ກັນ ທາງບວກ-ທາງລົບ ຕໍ່ການດຳລົງຊີວິດ, ການຄົງຕົວ, ການຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ;

**8. ການປົກປັກຮັກສາສິ່ງແວດລ້ອມ** ໝາຍເຖິງ ທຸກການເຄື່ອນໄຫວທີ່ປະກອບສ່ວນເຂົ້າໃນການຮັກສາສິ່ງແວດລ້ອມມີຄວາມຍືນຍົງບໍ່ໃຫ້ຖືກທຳລາຍ, ເຮັດໃຫ້ສິ່ງແວດລ້ອມປອດໃສ, ປາສະຈາກມົນລະພິດ, ບໍ່ສົ່ງຜົນສະທ້ອນອັນບໍ່ດີຕໍ່ສຸຂະພາບຂອງຄົນ, ສັດ, ພືດ ແລະ ສ້າງຄວາມດຸນດ່ຽງຂອງລະບົບນິເວດວິທະຍາ;

**9. ສາທາລະນຸປະໂພກ** ໝາຍເຖິງ ການບໍລິການສາທາລະນະ ທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ປະຊາຊົນ ໃນສິ່ງທີ່ຈຳເປັນຕໍ່ການດຳເນີນຊີວິດ ເຊັ່ນ ໄຟຟ້າ, ນ້ຳປະປາ, ໂທລະສັບ, ການເດີນທາງດ້ວຍລົດປະຈຳທາງ ແລະ ອື່ນໆ;

**10. ສາທາລະນຸປະການ** ໝາຍເຖິງ ການກໍ່ສ້າງ ແລະ ບູລະນະປະຕິສັງຂອນ;

**11. BE (Bio Extract)** ໝາຍເຖິງ ນ້ຳສະກັດຊີວະພາບໃຊ້ດັບກິ່ນ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບການຄຸ້ມຄອງຕົວເມືອງຫ້ວຍຊາຍ**

ລັດຊຸກຍູ້ສົ່ງເສີມວຽກງານຄຸ້ມຄອງຕົວເມືອງຫ້ວຍຊາຍດ້ວຍການວາງນະໂຍບາຍ, ກົດໝາຍ, ລະບຽບການ, ມາດຕະການຕ່າງໆ ໂດຍເອື້ອອຳນວຍໃຫ້ຄອບຄົວ, ການຈັດຕັ້ງນັບທັງຜູ້ປະກອບການພາຍໃນ ແລະ ຕ່າງປະເທດ ໄດ້ຮັບຄວາມສະດວກ, ວ່ອງໄວ ແລະ ມີສ່ວນຮ່ວມເຂົ້າໃນວຽກງານຄຸ້ມຄອງຕົວເມືອງຫ້ວຍຊາຍ ເພື່ອຕອບສະໜອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ເມືອງ ໃຫ້ມີຄວາມຍືນຍົງ.

**ມາດຕາ 5 ຫຼັກການກ່ຽວກັບການຄຸ້ມຄອງຕົວເມືອງຫ້ວຊາຍ**

ການເຄື່ອນໄຫວວຽກງານຄຸ້ມຄອງຕົວເມືອງຫ້ວຍຊາຍ ໃຫ້ປະຕິບັດຕາມຫຼັກການດັ່ງຕໍ່ໄປນີ້:

1. ຮັບປະກັນຄວາມສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ເມືອງ ແລະ ຖືກຕ້ອງຕາມກົດໝາຍ;

2. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວເມືອງຫ້ວຍຊາຍ;

3. ສົມທົບຢ່າງກົມກຽວຜົນປະໂຫຍດຂອງລັດ, ລວມໝູ່, ຄອບຄົວ, ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ;

4. ທຸກຄົນ ແລະ ທຸກການຈັດຕັ້ງຢູ່ໃນຕົວເມືອງຫ້ວຍຊາຍ ຕ້ອງມີພັນທະໃນການຄຸ້ມຄອງ, ປົກປັກຮັກສາຕົວເມືອງ ແລະ ສິ່ງແວດລ້ອມ.

**ມາດຕາ 6 ຂອບເຂດການນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບການຈັດຕັ້ງຂອງພັກ-ລັດ, ການຈັດຕັ້ງມະຫາຊົນ, ສັງຄົມ, ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງການຄຸ້ມຄອງ, ການພັດທະນາ ແລະ ນຳໃຊ້ເຂດຕົວເມືອງຫ້ວຍຊາຍ (ເທດສະບານ) ແຂວງບໍ່ແກ້ວ.

## ໝວດທີ 2
## ທີ່ຕັ້ງ, ຂອບເຂດ ແລະ ອົງປະກອບ

**ມາດຕາ 7 ທີ່ຕັ້ງ**

ຕົວເມືອງຫ້ວຍຊາຍຕັ້ງຢູ່ໃຈກາງເທດສະບານແຂວງ, ປະກອບດ້ວຍ 2 ເທດສະບານ, ກວມເອົາ 15 ບ້ານດັ່ງນີ້:

1. ເທດສະບານໜຶ່ງປະກອບດ້ວຍ: ບ້ານໜອງຊາຍ, ບ້ານຂອນແກ້ວ, ບ້ານໃຫຍ່ຫ້ວຍເໜືອ, ບ້ານໃຫຍ່ຫ້ວຍຊາຍໄຕ້, ບ້ານຕົ້ນທາດ ແລະ ບ້ານປ່າອ້ອຍ;

2. ເທດສະບານສອງປະກອບດ້ວຍ: ບ້ານໃໝ່ພູຄາ, ບ້ານນ້ຳຫ້ໄຕ້, ບ້ານດອນ, ບ້ານວຽງໃໝ່, ບ້ານປາກຮາວໄຕ້, ບ້ານມົກກະຈອກ, ບ້ານປາກຮາວເໜືອ, ບ້ານພິບູນທອງ ແລະ ບ້ານຊຸດົມ.

**ມາດຕາ 8 ຂອບເຂດ**

ຂອບເຂດຕົວເມືອງຫ້ວຍຊາຍ ແມ່ນເລີ່ມແຕ່ບ້ານໜອງຊາຍລຽບຕາມເສັ້ນທາງແຄມຂອງລົງໄປຮອດບ້ານດອນ (ຂົວມິດຕະພາບ 4 ຫ້ວຍຊາຍ-ຊຽງຂອງ), ຕັ້ງແຕ່ບ້ານໃໝ່ພູຄາຂຶ້ນໄປຕາມທາງ R3 ຈົນຮອດສີ່ແຍກບ້ານຂອນແກ້ວ, ຊຶ່ງກວມເອົາເນື້ອທີ່ຂອງຈຳນວນບ້ານ ທີ່ໄດ້ລະບຸໄວ້

ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 9 ອົງປະກອບ**

ອົງປະກອບຫຼັກຂອງຕົວເມືອງຫ້ວຍຊາຍ ແມ່ນປະກອບດ້ວຍຂອບເຂດຕົວເມືອງເກົ່າ, ຕົວເມືອງໃໝ່, ບັນດາຊັບພະຍາກອນທຳມະຊາດທີ່ມີຊີວິດ, ບໍ່ມີຊີວິດ ແລະ ສິ່ງກໍ່ສ້າງສາທາລະນຸປະໂຫຍດທັງໝົດທີ່ນອນຢູ່ໃນຂອບເຂດຕົວເມືອງຫ້ວຍຊາຍ.

**ມາດຕາ 10 ການປົກປັກຮັກສາຕົວເມືອງ**

ທຸກຊັ້ນຄົນຕ້ອງໄດ້ປະກອບສ່ວນໃນການປົກປັກຮັກສາພື້ນຖານໂຄງລ່າງ ແລະ ສາທາລະນຸປະໂພກ, ສາທາລະນຸປະການ, ສິ່ງປຸກສ້າງທີ່ເປັນມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງບັນດາເຜົ່າໄວ້ໃຫ້ໝັ້ນຄົງ.

## ໝວດທີ 3
## ການຄຸ້ມຄອງການປຸກສ້າງ

**ມາດຕາ 11 ການອະນຸຍາດການປຸກສ້າງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາກລັດ ແລະ ເອກະຊົນ ທີ່ຕ້ອງການປຸກສ້າງອາຄານ, ເຮືອນພັກຕ່າງໆພາຍໃນຕົວເມືອງ ຕ້ອງໄດ້ປະກອບເອກະສານເພື່ອຂໍອະນຸຍາດປຸກສ້າງໃຫ້ຖືກຕ້ອງຕາມແຕ່ລະຂັ້ນຕອນ ແລະ ແຜນຜັງສະຖາປັດຕິຍະກຳ ແລະ ເຕັກນິກ ເຊິ່ງອອກແບບໂດຍພາກສ່ວນຕ່າງໆ ທີ່ຖືກຕ້ອງຕາມລະບຽບກົດໝາຍ ແລະ ຕ້ອງໄດ້ຮັບຮອງທາງດ້ານເຕັກນິກການກໍ່ສ້າງຈາກພາກສ່ວນເຄຫາຜັງເມືອງ.

**ມາດຕາ 12 ຜູ້ທີ່ໄດ້ຮັບອະນຸຍາດປຸກສ້າງມີໜ້າທີ່ ແລະ ຄວາມຮັບຜິດຊອບ**

1. ໃນເວລາລົງມືປຸກສ້າງຕ້ອງສົມທົບກັບຜູ້ຮັບເໝົາ, ປະຕິບັດເຂັ້ມງວດຕໍ່ມາດຕະການໃນການຮັກສາຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ພ້ອມທັງຮັກສາສິ່ງແວດລ້ອມ ເພື່ອຫຼີກເວັ້ນການສ້າງຜົນກະທົບອັນບໍ່ດີຕໍ່ຜູ້ຢູ່ອາໄສໃນບໍລິເວນໃກ້ຄຽງ ຫຼື ຕໍ່ສາທາລະນະ;

2. ຕ້ອງໃຫ້ການຮ່ວມມື, ສະແດງໃບອະນຸຍາດ, ເອກະສານປຸກສ້າງຄົບຊຸດ ແລະ ປະຕິບັດຕາມການ ແນະນຳຂອງພະນັກງານວິຊາການ, ຂະແໜງການຄຸ້ມຄອງການປຸກສ້າງທີ່ລົງກວດກາຢ່າງເຂັ້ມງວດ;

3. ເວລາລົງຕິດຕາມ, ກວດກາວຽກ ກໍລະນີພົບເຫັນເຈົ້າໜ້າທີ່ວິຊາການ ແລະ ຂະແໜງການຄຸ້ມຄອງການປຸກສ້າງປະຕິບັດບໍ່ຖືກຕ້ອງ, ສວຍໃຊ້ອຳນາດໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ໃຊ້ສິດເກີນຂອບເຂດ ຕ້ອງແຈ້ງຕໍ່ຂັ້ນເທິງຮັບຊາບເພື່ອມີວິທີແກ້ໄຂຢ່າງທັນການ;

4. ພາຍຫຼັງທີ່ປຸກສ້າງສຳເລັດແລ້ວ, ຕ້ອງແຈ້ງໃຫ້ອົງການຄຸ້ມຄອງການປຸກສ້າງຊາບ ເພື່ອລົງກວດກາ ແລະ ອອກເອກະສານຢັ້ງຢືນຄວາມຖືກຕ້ອງທາງດ້ານເຕັກນິກ ແລະ ຄຸນນະພາບ.

**ມາດຕາ 13 ການຕິດຕັ້ງປ້າຍໂຄສະນາ**

ບຸກຄົນ, ນິຕິບຸກຄົນ, ໂຮງຈັກໂຮງງານ, ຫົວໜ່ວຍທຸລະກິດ ແລະ ອົງການຈັດຕັ້ງຕ່າງໆ ມີຈຸດປະສົງກໍ່ສ້າງປ້າຍໂຄສະນາ ຫຼື ຕິດຕັ້ງປ້າຍໂຄສະນາໃດໜຶ່ງພາຍໃນຕົວເມືອງ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງສາກ່ອນ ຈຶ່ງດຳເນີນການກໍ່ສ້າງ ຫຼື ຕິດຕັ້ງປ້າຍໂຄສະນາໄດ້ ແລະ

ຕ້ອງຈ່າຍຄ່າທຳນຽມຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 14 ຄວາມຮັບຜິດຊອບຂອງຜູ້ຮັບເໝົາກໍ່ສ້າງ**

ຈັດວາງພາຫະນະ, ເຄື່ອງມືອຸປະກອນ ແລະ ວັດສະດຸຕ່າງໆ ທີ່ນຳໃຊ້ໃນການປຸກສ້າງ-ກໍ່ສ້າງ ຫຼື ສ້ອມແປງໂດຍບໍ່ໃຫ້ກີດຂວາງການສັນຈອນ ແລະ ສ້າງຄວາມເປິະເປື້ອນ ຫຼື ເຮັດໃຫ້ມີຜົນກະທົບຕໍ່ຜູ້ອື່ນ, ຕ້ອງມີຮົ້ວກັ້ນບໍລິເວນກໍ່ສ້າງ ເພື່ອປ້ອງກັນອັນຕະລາຍທີ່ຈະເກີດຂຶ້ນໃນເວລາດຳເນີນການກໍ່ສ້າງ ຫຼື ສ້ອມແປງ, ປະຕິບັດຢ່າງເຂັ້ມງວດຕໍ່ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍທາງດ້ານສັງຄົມ-ສິ່ງແວດລ້ອມ, ການປຸກສ້າງຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມແບບທີ່ໄດ້ຮັບອະນຸຍາດ ແລະ ທາງດ້ານມາດຖານເຕັກນິກ.

**ມາດຕາ 15 ການຄຸ້ມຄອງການຈົກດິນ, ການຖົມດິນ ແລະ ການຂົນຍ້າຍດິນ**

ທຸກພາກສ່ວນຈະແມ່ນການຈັດຕັ້ງພາກລັດ, ເອກະຊົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງຈົກດິນ, ຖົມດິນ ແລະ ຂົນຍ້າຍດິນ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຂອງແຂວງ, ຂອງເມືອງສາກ່ອນ ແລະ ຕ້ອງໄດ້ກຳນົດສະຖານທີ່ຈະຖົມດິນຢ່າງຄັກແນ່, ການຂົນຍ້າຍດິນແຕ່ລະຄັ້ງຕ້ອງໄດ້ມີການປົກປັກຮັກສາບໍ່ໃຫ້ດິນຕົກເຮ່ຍໃສ່ເສັ້ນທາງ.

## ໝວດທີ 4
## ການຄຸ້ມຄອງສິ່ງແວດລ້ອມ

**ມາດຕາ 16 ການເກັບມ້ຽນຂີ້ເຫຍື້ອ**

ສຳນັກງານອົງການ, ບ້ານ, ໂຮງຈັກໂຮງງານ, ຫົວໜ່ວຍທຸລະກິດຕ່າງໆ, ຄົວເຮືອນ, ຜູ້ໃຊ້ບໍລິການຂີ້ເຫຍື້ອຕ້ອງມີອຸປະກອນເກັບມ້ຽນຂີ້ເຫຍື້ອເປັນຕົ້ນ: ຕ້ອງມີພາສະນະເກັບມ້ຽນຂີ້ເຫຍື້ອ (ຖັງ, ກະຕ່າ, ຖົງໃສ່ຂີ້ເຫຍື້ອ) ແຍກປະເພດຂີ້ເຫຍື້ອອອກເປັນ 3 ປະເພດຄື: ຂີ້ເຫຍື້ອປຽກ, ຂີ້ເຫຍື້ອແຫ້ງ ແລະ ຂີ້ເຫຍື້ອທີ່ເປັນພິດ ດັ່ງນີ້:

1. ຂີ້ເຫຍື້ອປຽກ: ປະເພດເສດອາຫານ, ເສດຜັກ, ເປືອກໝາກໄມ້ ແລະ ອື່ນໆ;
2. ຂີ້ເຫຍື້ອແຫ້ງ: ແກັດເຈ້ຍ, ຖົງຢາງ, ກະຕຸກຢາງ, ປະເພດຂວດແກ້ວ, ເສດເຫຼັກ ແລະ ອື່ນໆ;
3. ຂີ້ເຫຍື້ອທີ່ເປັນພິດ: ຖ່ານໄຟສາຍເກົ່າ, ຫຼອດໄຟ, ກ່ອງຢາຂ້າຫຍ້າ, ຂ້າແມງໄມ້ ແລະ ພາສະນະບັນຈຸສານເຄມີ ແລະ ອື່ນ ເພື່ອສະດວກໃນການເກັບມ້ຽນ ແລະ ການຂົນສົ່ງ.

**ມາດຕາ 17 ສະຖານທີ່ເກັບມ້ຽນຂີ້ເຫຍື້ອ**

ທຸກຄົວເຮືອນ, ສຳນັກງານອົງການ, ໂຮງຈັກ, ໂຮງງານ ແລະ ຜູ້ປະກອບການຕ່າງໆ ຕ້ອງມີສະຖານທີ່ເກັບມ້ຽນຂີ້ເຫຍື້ອໃຫ້ເປັນລະບຽບຮຽບຮ້ອຍ, ບໍ່ໃຫ້ເອົາເສັ້ນທາງ, ບ່າທາງ, ທາງຄົນຍ່າງເປັນບ່ອນເກັບມ້ຽນຂີ້ເຫຍື້ອ ທີ່ສ້າງສິ່ງກີດຂວາງຕໍ່ກັບການຈາລະຈອນ ແລະ ຄົນຍ່າງ.

**ມາດຕາ 18 ການບໍລິການຂີ້ເຫຍື້ອ**

ຄົວເຮືອນ, ສຳນັກງານອົງການຂອງລັດ, ບໍລິສັດ, ໂຮງຈັກໂຮງງານ ແລະ ຜູ້ປະກອບການຕ່າງໆ ຕ້ອງຫັນມາໃຊ້ບໍລິການຂີ້ເຫຍື້ອກັບໜ່ວຍບໍລິການຂີ້ເຫຍື້ອທີ່ໄດ້ຮັບອະນຸຍາດ ຈາກອົງການກ່ຽວຂ້ອງເທົ່ານັ້ນ ແລະ ຜູ້ເຮັດໜ້າທີ່ບໍລິການຂີ້ເຫຍື້ອຕ້ອງປະຕິບັດເວລາການບໍລິການໃຫ້ຖືກຕ້ອງ

ແລະ ທັນເວລາ ພ້ອມທັງເກັບມ້ຽນຂີ້ເຫຍື້ອໃຫ້ໝົດ, ກໍລະນີມີບັນຫາການຂົນສົ່ງຕິດຂັດຕ້ອງແຈ້ງໃຫ້ບ້ານ ຫຼື ຜູ້ໃຊ້ບໍລິການຂີ້ເຫຍື້ອໄດ້ຮັບຊາບກ່ອນລ່ວງໜ້າ 1 ວັນ, ເພື່ອບໍ່ໃຫ້ເອົາຂີ້ເຫຍື້ອອອກມາໄວ້ຕາມແຄມທາງ.

**ມາດຕາ 19 ການຂົນສົ່ງຂີ້ເຫຍື້ອໄປຖິ້ມຢູ່ສະໜາມຂີ້ເຫຍື້ອ**

ສຳນັກງານ, ອົງການ, ໂຮງຈັກໂຮງງານ, ໂຮງຮຽນໂຮງໝໍ, ຕະຫຼາດ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ຄົວເຮືອນປະຊາຊົນ ທີ່ເອົາຂີ້ເຫຍື້ອໄປຖິ້ມດ້ວຍຕົນເອງແຕ່ລະຄັ້ງຕ້ອງມີຜ້າປົກຫຸ້ມ ເພື່ອບໍ່ໃຫ້ຂີ້ເຫຍື້ອຕົກເຮ່ຍໃສ່ເສັ້ນທາງ ຫຼື ໄປຖິ້ມໃສ່ຕາມແຄມທາງຢ່າງເດັດຂາດ.

**ມາດຕາ 20 ການຖິ້ມຂີ້ເຫຍື້ອຕາມສະຖານທີ່ຕ່າງໆ ພາຍໃນຕົວເມືອງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ບໍ່ໃຫ້ຖິ້ມຂີ້ເຫຍື້ອທຸກປະເພດໃສ່ເສັ້ນທາງ, ປ່າທາງ, ແຄມທາງ, ດິນເປົ່າຫວ່າງ, ສະຖານທີ່ສາທາລະນະ, ສະຖານທີ່ບໍລິການຄ້າຂາຍ, ສະຖານທີ່ມີການຈັດງານຕ່າງໆ, ຮ່ອງລະບາຍນ້ຳ, ນ້ຳຫ້ວຍ, ແມ່ນ້ຳຂອງ ທີ່ເປັນສາເຫດເຮັດໃຫ້ຕົວເມືອງບໍ່ມີຄວາມສະອາດຈົບງາມ.

**ມາດຕາ 21 ການຖິ້ມຂີ້ເຫຍື້ອອອກຈາກຍານພາຫະນະ**

ໃນເວລາລົດແລ່ນ ແລະ ຈອດລົດຕາມເສັ້ນທາງ ຜູ້ຂັບລົດ, ຜູ້ໂດຍສານບໍ່ໃຫ້ຖິ້ມຂີ້ເຫຍື້ອອອກຈາກລົດລົງໃສ່ເສັ້ນທາງ ເມື່ອຮອດບ່ອນຈອດລົດ (ຄິວລົດ) ຈຶ່ງເອົາອອກມາຖິ້ມໃສ່ກະຕ່າ ຫຼື ຖັງຂີ້ເຫຍື້ອສາທາລະນະ, ລົດໂດຍສານທຸກຄັນຕ້ອງມີກະຕ່າ ຫຼື ຖົງຢາງ ເປັນບ່ອນເກັບມ້ຽນຂີ້ເຫຍື້ອ.

**ມາດຕາ 22 ການຈູດເຜົາຂີ້ເຫຍື້ອ ຫຼື ສິ່ງເສດເຫລືອ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນ ບໍ່ໃຫ້ຈູດເຜົາຂີ້ເຫຍື້ອໃນຕົວເມືອງ, ເຂດຊຸມຊົນໃນຕົວເມືອງ, ຢູ່ຕາມໂຮງຈັກໂຮງງານ, ຕະຫຼາດ, ໂຮງຮຽນ, ໂຮງໝໍ, ບ້ານ, ແຄມທາງ ແລະ ສະຖານທີ່ອື່ນ ທີ່ສ້າງມົນລະພິດ ເຊິ່ງຈະເປັນຜົນກະທົບຕໍ່ກັບສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ.

## ໝວດທີ 5
## ການຄຸ້ມຄອງ ແລະ ການນຳໃຊ້ນ້ຳ, ສານເຄມີ, ແສງ, ສີ, ສຽງ

**ມາດຕາ 23 ການຄຸ້ມຄອງ ແລະ ການນຳໃຊ້ນ້ຳ**

ບັນດາໂຮງຈັກໂຮງງານ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ, ໂຮງຮຽນ, ໂຮງໝໍ, ສຳນັກງານອົງການຂອງລັດ-ເອກະຊົນ ແລະ ຄົວເຮືອນ ຕ້ອງມີບໍ່ບຳບັດນ້ຳເປື້ອນ, ນ້ຳເສຍ ໂດຍການຂ້າເຊື້ອ, ດັບກິ່ນດ້ວຍນ້ຳຊີວະພາບ BE ແລະ ວິທີການອື່ນແລ້ວຈຶ່ງປ່ອຍຖິ້ມ, ເພື່ອປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມທາງທຳມະຊາດ ແລະ ສັງຄົມ.

**ມາດຕາ 24 ການຄຸ້ມຄອງສິ່ງແວດລ້ອມທາງແສງ, ສີ, ສຽງ**

ໂຮງຈັກໂຮງງານ, ຜູ້ດຳເນີນທຸລະກິດ, ປະກອບການສ້ອມແປງພາຫະນະ, ຈອດໂລຫະ, ເຄາະຈອດ, ພົ່ນສີ, ສະຖານທີ່ບັນເທີງ, ຮ້ານອາຫານຕ່າງໆ ຕ້ອງຮັບປະກັນບໍ່ເຮັດໃຫ້ເກີດມີສຽງເນື່ອງນັນ, ກິ່ນຂີວເໝັນ ທີ່ພາໃຫ້ມີຜົນກະທົບຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມອ້ອມຂ້າງຕ້ອງມີວິທີການ ແລະມາດຕະການເພື່ອຫຼຸດຜ່ອນບໍ່ໃຫ້ເກີດມີຜົນກະທົບຕໍ່ສິ່ງແວດລ້ອມເກີນມາດ

ມາດຕະຖານກົດໝາຍກຳນົດໄວ້.

## ໝວດທີ 6
## ການຄຸ້ມຄອງ ແລະ ກວດກາວຽກງານຄຸ້ມຄອງຕົວເມືອງຫ້ວຍຊາຍ

**ມາດຕາ 25 ອົງການຮັບຜິດຊອບຄຸ້ມຄອງຕົວເມືອງປະກອບມີ:**

1. ພະແນກໂຍທາທິການ ແລະ ຂົນສົ່ງແຂວງ;
2. ອົງການພັດທະນາ ແລະ ບໍລິຫານຕົວເມືອງ (ອພບຕ);
3. ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງຫ້ວຍຊາຍ;
4. ອົງການປົກຄອງເມືອງຫ້ວຍຊາຍ;
5. ອົງການປົກຄອງບ້ານ.

**ມາດຕາ 26 ຄວາມຮັບຜິດຊອບຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ**

ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ຮັບຜິດຊອບຄຸ້ມຄອງຕົວເມືອງ ດັ່ງນີ້:

1. ມີໜ້າທີ່ເຜີຍແຜ່, ສຶກສາອົບຮົມປະຊາຊົນທຸກຊັ້ນຄົນພາຍໃນ ແລະ ຄົນຕ່າງປະເທດຢູ່ພາຍໃນເມືອງຫ້ວຍຊາຍ ແຂວງບໍ່ແກ້ວ ໃຫ້ເຂົ້າຮ່ວມ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງແຂວງ ແລະ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;

2. ສ້າງແຜນຜັງເມືອງ (ຕົວເມືອງ) ເພື່ອສະເໜີໃຫ້ອຳນາດການປົກຄອງແຂວງ, ກະຊວງໂຍທາທິການ ແລະ ຂົນສົ່ງ ໃນການພິຈາລະນາຮັບຮອງເອົາ;

3. ສ້າງແຜນງົບປະມານປະຈຳປີ ແລະ ລະດົມທຶນເຂົ້າໃນການກໍ່ສ້າງ, ສ້ອມແປງທາງດ້ານພື້ນຖານໂຄງລ່າງເປັນຕົ້ນ: ເສັ້ນທາງ, ຮ່ອງລະບາຍນ້ຳ;

4. ອອກໃບອະນຸຍາດການປຸກສ້າງ ຫຼື ສ້ອມແປງ ແລະ ອອກໃບອະນຸຍາດຄວາມຖືກຕ້ອງ;

5. ຈັດຕັ້ງປະຕິບັດ ແລະ ກວດກາການກໍ່ສ້າງ, ສ້ອມແປງ ໃຫ້ຖືກຕາມຜັງເມືອງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

6. ສະຫຼຸບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຕົວເມືອງທີ່ເກີດຂຶ້ນ ແລະ ຂໍຄຳເຫັນນຳຂັ້ນເທິງມີທິດຊີ້ນຳໃນການແກ້ໄຂບັນຫາຫຍຸ້ງຍາກຕ່າງໆ ແລະ ສະເໜີການຍ້ອງຍໍສັນລະເສີນຜູ້ທີ່ມີຜົນງານ;

7. ປະຕິບັດໜ້າທີ່ອື່ນຕາມການມອບໝາຍຈາກຂັ້ນເທິງ.

**ມາດຕາ 27 ຄວາມຮັບຜິດຊອບຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ (ອພບຕ)**

ອົງການພັດທະນາ ແລະ ບໍລິຫານຕົວເມືອງ (ອພບຕ) ຮັບຜິດຊອບຄຸ້ມຄອງຕົວເມືອງ ດັ່ງນີ້:

1. ໂຄສະນາເຜີຍແຜ່ຂໍ້ຕົກລົງສະບັບນີ້, ໃຫ້ປະຊາຊົນທຸກຊັ້ນຄົນພາຍໃນ ແລະ ຄົນຕ່າງປະເທດທີ່ດຳລົງຊີວິດຢູ່ໃນຕົວເມືອງຫ້ວຍຊາຍ ໃຫ້ເຂົ້າຮ່ວມ ແລະ ເປັນເຈົ້າການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

2. ອອກໃບອະນຸຍາດການປຸກສ້າງ, ສ້ອມແປງ ແລະ ອອກໃບອະນຸຍາດຄວາມຖືກຕ້ອງປ້າຍໂຄສະນາ;

3. ຈັດຕັ້ງປະຕິບັດ ແລະ ກວດກາການກໍ່ສ້າງ, ການສ້ອງແປງໃຫ້ຖືກຕາມຜັງເມືອງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

4. ປົກປັກຮັກສາຄວາມສະອາດ ແລະ ປະດັບປະດາຕົວເມືອງໃຫ້ມີຄວາມຈົບງາມ;

5. ສ້າງແຫລ່ງລາຍຮັບເຂົ້າໃນການປົກປັກຮັກສາ ແລະ ພັດທະນາຕົວເມືອງ ໃຫ້ມີຄວາມສະອາດ ຈົບງາມ;

6. ກວດກາພາຍໃນຂອບເຂດເທດສະບານຕົວເມືອງຫ້ວຍຊາຍເປັນປົກກະຕິ ພ້ອມທັງສະຫຼຸບລາຍງານປະຈຳເດືອນ ຫຼື 3 ເດືອນຕໍ່ຄັ້ງ ຕໍ່ກັບຜົນຂອງການກວດກາປັບໃໝ ແລ້ວສົ່ງໃຫ້ອົງການທີ່ກ່ຽວຂ້ອງ ແລະ ຂັ້ນເທິງເປັນປົກກະຕິ;

7. ສະຫຼຸບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຕົວເມືອງທີ່ເກີດຂຶ້ນ ແລະ ຂໍຄຳເຫັນນຳຂັ້ນເທິງມີທິດຊີ້ນຳໃນການແກ້ໄຂບັນຫາຫຍຸ້ງຍາກຕ່າງໆ ແລະ ສະເໜີການຍ້ອງຍໍສັນລະເສີນຜູ້ທີ່ມີຜົນງານ ແລະ ລົງວິໄນຕໍ່ທຸກພາກສ່ວນທີ່ລະເມີດຂໍ້ຕົກລົງສະບັບນີ້;

8. ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 28 ຄວາມຮັບຜິດຊອບຂອງຫ້ອງການໂຍທາທິການ-ຂົນສົ່ງເມືອງຫ້ວຍຊາຍ**

ຫ້ອງການໂຍທາທິການ-ຂົນສົ່ງເມືອງຫ້ວຍຊາຍ ຮັບຜິດຊອບຄຸ້ມຄອງຕົວເມືອງ ດັ່ງນີ້:

1. ໂຄສະນາເຜີຍແຜ່, ສຶກສາອົບຮົມໃຫ້ທຸກຊັ້ນຄົນພາຍໃນ ແລະ ຕ່າງປະເທດທີ່ດຳລົງຊີວິດຢູ່ພາຍໃນເມືອງຫ້ວຍຊາຍເຂົ້າຮ່ວມໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;

2. ຈັດຕັ້ງປະຕິບັດຜັງເມືອງຕາມການມອບໝາຍຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍ່ແກ້ວ;

3. ປະຕິບັດໜ້າທີ່ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 29 ຄວາມຮັບຜິດຊອບຂອງອົງການປົກຄອງເມືອງຫ້ວຍຊາຍ**

ອົງການປົກຄອງເມືອງຫ້ວຍຊາຍ ຮັບຜິດຊອບຄຸ້ມຄອງຕົວເມືອງ ດັ່ງນີ້:

1. ໂຄສະນາເຜີຍແຜ່, ສຶກສາອົບຮົມໃຫ້ທຸກຊັ້ນຄົນພາຍໃນ ແລະ ຕ່າງປະເທດທີ່ດຳລົງຊີວິດຢູ່ພາຍໃນເມືອງຫ້ວຍຊາຍ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;

2. ຊີ້ນຳ, ຄຸ້ມຄອງ, ກວດກາ ແລະ ຄວບຄຸມ ການອະນຸຍາດປຸກສ້າງ, ການພັດທະນາແຕ່ລະຈຸດຢູ່ໃນຕົວເມືອງຫ້ວຍຊາຍ, ຍ້ອງຍໍ ແລະ ລົງວິໄນຕໍ່ທຸກພາກສ່ວນທີ່ລະເມີດຂໍ້ຕົກລົງສະບັບນີ້;

3. ປະຕິບັດໜ້າທີ່ຕາມການມອບໝາຍຂອງແຂວງ.

**ມາດຕາ 30 ຄວາມຮັບຜິດຊອບຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານ ຮັບຜິດຊອບຄຸ້ມຄອງຕົວເມືອງ ດັ່ງນີ້:

1. ໂຄສະນາເຜີຍແຜ່ຂໍ້ຕົກລົງສະບັບນີ້ ໃຫ້ທຸກຊັ້ນຄົນພາຍໃນບ້ານຂອງຕົນເຂົ້າຮ່ວມໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ

2. ນຳພາປະຊາຊົນພາຍໃນບ້ານຂອງຕົນຈັດຕັ້ງປະຕິບັດວຽກງານອະນາໄມບ້ານ, ປະດັບປະດາບ້ານໃຫ້ມີຄວາມຈົບງາມ ແລະ ຄວາມເປັນລະບຽບຮຽບຮ້ອຍພາຍໃນບ້ານ;

3. ຊ່ວຍຄຸ້ມຄອງວຽກງານປຸກສ້າງ, ສ້ອມແປງ ໃນຂອບເຂດບ້ານຂອງຕົນ;

4. ເຮັດບົດບັນທຶກສັນຍານຳແຕ່ລະຄົວເຮືອນກ່ຽວກັບການຮັກສາອະນາໄມທຳຄວາມສະອາດໃນຂອບເຂດໜ້າເຮືອນຂອງຕົນ ໃຫ້ມີຄວາມສະອາດຈົບງາມ ແລະ ມີຄວາມເປັນລະບຽບຮຽບຮ້ອຍ;

5. ປະສານງານກັບການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງຕົວເມືອງ;

6. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 31 ຄວາມຮັບຜິດຊອບຂອງພົນລະເມືອງ**

ເພື່ອເຮັດໃຫ້ການປົກປັກຮັກສາ ແລະ ພັດທະນາຕົວເມືອງທ້ອຍຊາຍ ໄດ້ດໍາເນີນໄປຢ່າງມີປະສິດທິຜົນນັ້ນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ຕ້ອງມີພັນທະປະຕິບັດຕາມລະບຽບການຄຸ້ມຄອງຕົວເມືອງຢ່າງເຂັ້ມງວດ ດັ່ງນີ້:

1. ສໍານັກງານອົງການຂອງລັດ ແລະ ເອກະຊົນ, ຜູ້ປະກອບການ, ບັນດາບ້ານຕະຫຼອດຮອດຄົວເຮືອນທົ່ວໄປ ຕ້ອງມີຄວາມຮັບຜິດຊອບໃນການຖາງຫຍ້າ, ປັດກວາດສະຖານທີ່ຢູ່ອາໄສ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນເອງໃຫ້ສະອາດສວຍງາມ; ຜູ້ທີ່ໃຊ້ລະບົບຖະໜົນຫົນທາງ, ຕະຄອງຮ່ອງນໍ້າ ແລະ ອື່ນ ລ້ວນແຕ່ມີພັນທະປະກອບສ່ວນເຂົ້າໃນການກໍ່ສ້າງ, ສ້ອມແປງ, ບູລະນະ, ປົກປັກຮັກສາ ໃຫ້ມີຄວາມຍືນຍົງ; ຂອບເຂດດິນເຮືອນ, ດິນສວນ, ດິນເປົ່າຫວ່າງກໍ່ຕ້ອງໄດ້ອະນາໄມ, ບໍ່ປ່ອຍໃຫ້ຮົກເຮື້ອ, ເປິະເປື້ອນ, ເນົ່າເໝັນ ທີ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ;

2. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຕອນດິນເປົ່າຫວ່າງ ຫຼື ສິ່ງກໍ່ສ້າງຢູ່ແຄມທາງ ຫຼື ຢູ່ໃນຕົວເມືອງຕ້ອງປົກປັກຮັກສາອະນາໄມໃຫ້ມີຄວາມສະອາດຈົບງາມ ແລະ ເປັນລະບຽບຮຽບຮ້ອຍ ບໍ່ປະໄວ້ເຮັດໃຫ້ເປິະເປື້ອນ, ຮົກເຮື້ອ, ບໍ່ສະອາດງາມຕາ;

3. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆໃນສັງຄົມ ຕ້ອງເປັນເຈົ້າການເຂົ້າຮ່ວມຢ່າງແຂງແຮງໃນການປັບປຸງຕົບແຕ່ງປະດັບປະດາເຮືອນຊານບ້ານຊ່ອງ, ສໍານັກງານອົງການ ໂດຍສະເພາະອາຄານເຮືອນຊານທີ່ຕັ້ງຢູ່ແຄມຖະໜົນໃຫ້ມີສີສັນຈົບງາມ, ປັບປຸງແກ້ໄຂບັນຫາສິ່ງແວດລ້ອມຢູ່ໃນຂອບເຂດອາຄານເຊັ່ນ: ທໍາຄວາມສະອາດ, ປູກຕົ້ນໄມ້, ດອກໄມ້ຢູ່ສວນໜ້າບ້ານ ຫຼື ຕາມແຄມທາງຕໍ່ໜ້າແຕ່ລະເຮືອນ;

4. ຜູ້ປຸກສ້າງເຄຫາສະຖານຢູ່ຕາມແຄມທາງລວມທັງສໍານັກງານອົງການພາກລັດ ແລະ ພາກເອກະຊົນ ຕະຫຼອດຮອດເຮືອນປະຊາຊົນ, ພະນັກງານ, ທະຫານ, ຕໍາຫຼວດທີ່ມີດິນ, ມີເຮືອນຕັ້ງຢູ່ແຄມຖະໜົນຫົນທາງໃຫຍ່ ຫຼື ນ້ອຍ ຕ້ອງເປັນເຈົ້າການປົກປັກຮັກສາ, ອະນາໄມໜ້າທາງ, ທາງຍ່າງ ແລະ ຮ່ອງລະບາຍນໍ້າ ທີ່ນອນຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ມີຄວາມສະອາດສວຍງາມຕະຫຼອດເວລາ, ເພື່ອເຮັດໃຫ້ອາກາດພາຍໃນຕົວເມືອງມີຄວາມຊຸ່ມຊື່ນ ແລະ ສົດໃສ ປາສະຈາກກິ່ນຄວັນທີ່ເປັນມົນລະພິດ, ຕ້ອງໄດ້ປູກດອກໄມ້, ຕົ້ນໄມ້ໃສ່ແຄມທາງຕາມແຜນການທີ່ແຂວງໄດ້ກໍານົດໄວ້ ເພື່ອເຮັດໃຫ້ຕົວເມືອງມີສີສັນສວຍງາມ, ທັງຮັກສາອາກາດໃຫ້ມີຄວາມສົມດຸ່ນທາງລະບົບນິເວດ, ປາສະຈາກອຸນຫະພູມຮ້ອນເອົ້າອາດຈະເກີດຂຶ້ນໃນຕໍ່ໜ້າ ແລະ ແນໃສ່ໃຫ້ມີຄວາມຂຽວງາມຕະຫຼອດປີ

5. ບັນດາສໍານັກງານອົງການ, ໂຮງຈັກ, ໂຮງງານ, ໂຮງຮຽນ, ໂຮງໝໍ, ຫົວໜ່ວຍທຸລະກິດ, ຄົວເຮືອນ ມີໜ້າທີ່ຈ່າຍເງິນຄ່າພັນທະເຂົ້າໃນວຽກງານບໍລິການຕົວເມືອງເປັນຕົ້ນແມ່ນ: ຄ່າໄຟຟ້າສາທາລະນະ, ຄ່ານໍ້າເປື້ອນ, ນໍ້າເສຍ, ຄ່າບໍລິການເກັບມ້ຽນຂີ້ເຫຍື້ອ ແລະ ອື່ນ ແຕ່ລະເດືອນຕາມລາຄາທີ່ແຂວງໄດ້ກໍານົດອອກ (ຫົວໜ່ວຍລາຄາລະອຽດມີຂໍ້ຕົກລົງເຈົ້າແຂວງສະເພາະ);

6. ຕ້ອງຄຸ້ມຄອງບັນຫາກິ່ນ, ຄວັນ, ແສງ, ສີ, ສຽງ ໃຫ້ຢູ່ໃນສະພາບທີ່ສັງຄົມຍອມຮັບໄດ້, ຫຼີກເວັ້ນສ້າງຜົນກະທົບຕໍ່ເວລາເຮັດວຽກ, ເວລາພັກຜ່ອນ, ການສັນຈອນ, ຮັກສາລະບົບນໍ້າໃຊ້,

ນ້ຳເປື້ອນ ແລະ ສ້ວມຖ່າຍບໍ່ໃຫ້ອັ່ງຄ້າງ ແລະ ປ່ອຍຊະຊາຍສ້າງຄວາມເປື້ອນເປິະ, ສິ່ງກິ່ນເໝັນໃຫ້ຄົນອ້ອມຂ້າງກໍຄືຢູ່ໃນສັງຄົມ.

**ມາດຕາ 32 ການກວດກາວຽກງານຄຸ້ມຄອງຕົວເມືອງ**

ອົງການກວດກາວຽກງານຄຸ້ມຄອງຕົວເມືອງປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງຕົວເມືອງທ້ອຍຊາຍ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 25 ຂອງຂໍ້ຕົກລົງສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາປະຊາຊົນແຂວງ, ພະແນກກວດກາລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນແຂວງ, ເມືອງ.

**ມາດຕາ 33 ເນື້ອໃນຂອງການກວດກາ**

ການກວດກາວຽກງານຄຸ້ມຄອງຕົວເມືອງມີເນື້ອໃນດັ່ງນີ້:

1. ການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການຄຸ້ມຄອງຕົວເມືອງ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງຕົວເມືອງ;

3. ຄວາມຮັບຜິດຊອບ, ພຶດຕິກຳ ແລະ ແບບແຜນວິທີເຮັດວຽກຂອງພະນັກງານຄຸ້ມຄອງຕົວເມືອງ.

**ມາດຕາ 34 ຮູບການການກວດກາ**

ຮູບການກວດກາວຽກງານຄຸ້ມຄອງຕົວເມືອງມີຮູບການດັ່ງນີ້:

1. ການກວດກາຕາມປົກກະຕິ;

2. ການກວດກາໂດຍມີການແຈ້ງການໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ.

**ມາດຕາ 35 ມາດຕະການການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຕົວເມືອງ**

1. ຄະນະຮັບຜິດຊອບການຄຸ້ມຄອງຕົວເມືອງ, ເປັນເຈົ້າການໃນການຈັດຕັ້ງປະຕິບັດ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ໂດຍການລົງເຜີຍແຜ່ຂໍ້ຕົກລົງສະບັບນີ້ຢ່າງທົ່ວເຖິງທຸກບ້ານພາຍໃນຕົວເມືອງ ເພື່ອເຮັດໃຫ້ທຸກຊັ້ນຄົນຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ-ລັດ ກໍຄືຂໍ້ຕົກລົງສະບັບນີ້ຢ່າງເລິກເຊິ່ງ;

2. ພະແນກການຕ່າງໆຂັ້ນແຂວງ, ເມືອງທ້ອຍຊາຍ ຕ້ອງເປັນເຈົ້າການເຂົ້າຮ່ວມໃນການຈັດຕັ້ງປະຕິບັດ, ແກ້ໄຂບັນຫາຕ່າງໆທີ່ພົວພັນເຖິງວຽກງານການຄຸ້ມຄອງຕົວເມືອງ;

3. ຂັ້ນບ້ານຕ້ອງໄດ້ຈັດຕັ້ງໃຫ້ມີຄະນະກວດກາປັບໃໝຂອງບ້ານ, ເພື່ອຈັດຕັ້ງປະຕິບັດຢູ່ໃນຂອບເຂດບ້ານຂອງຕົນ ໂດຍແມ່ນເຈົ້າເມືອງເປັນຜູ້ແຕ່ງຕັ້ງຕາມຄວາມເໝາະສົມ;

4. ບັນດາຄອບຄົວ, ພົນລະເມືອງທຸກຄົນໃນໝູ່ບ້ານທີ່ຂຶ້ນກັບຕົວເມືອງ (ເທດສະບານ) ພ້ອມກັນເປັນເຈົ້າການໃນການຈັດຕັ້ງປະຕິບັດລະບຽບການຄຸ້ມຄອງຕົວເມືອງສະບັບນີ້ຢ່າງເຂັ້ມງວດ.

## ໝວດທີ 7
## ກອງທຶນຄຸ້ມຄອງຕົວເມືອງທ້ອຍຊາຍ

**ມາດຕາ 36 ກອງທຶນຄຸ້ມຄອງຕົວເມືອງທ້ອຍຊາຍ**

ລັດ ສົ່ງເສີມໃຫ້ມີການສ້າງຕັ້ງກອງທຶນຄຸ້ມຄອງຕົວເມືອງທ້ອຍຊາຍ ເພື່ອນຳໃຊ້ເຂົ້າໃນການ

ປ້ອງກັນ, ແກ້ໄຂ ແລະ ບູລະນະຟື້ນຟູ ສິ່ງແວດລ້ອມໃນຕົວເມືອງ ລວມທັງການອານຸລັກ ແລະ ປົກປັກຮັກສາພື້ນຖານໂຄງລ່າງຕ່າງໆທີ່ເປັນມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງແຂວງ ແລະ ຂອງເຜົ່າໄວ້ໃຫ້ໝັ້ນຄົງ.

**ມາດຕາ 37 ແຫຼ່ງກອງທຶນຄຸ້ມຄອງຕົວເມືອງຫ້ອຍຊາຍ**

ກອງທຶນຄຸ້ມຄອງຕົວເມືອງຫ້ອຍຊາຍໄດ້ມາຈາກແຫຼ່ງທຶນຕ່າງໆດັ່ງນີ້:

1. ງົບປະມານຂອງລັດ;
2. ຄ່າທຳນຽມ ການພັດທະນາກິດຈະການຕ່າງໆພາຍໃນເມືອງ;
3. ການຊ່ວຍເຫຼືອຂອງອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
4. ການປະກອບສ່ວນຂອງພາກສ່ວນທຸລະກິດ ແລະ ບຸກຄົນທົ່ວໄປ;
5. ຄ່າປັບໃໝ.

**ມາດຕາ 38 ການນຳໃຊ້ກອງທຶນຄຸ້ມຄອງຕົວເມືອງຫ້ອຍຊາຍ**

ກອງທຶນຄຸ້ມຄອງຕົວເມືອງຫ້ອຍຊາຍ ຈະຖືກນຳໃຊ້ເຂົ້າໃນວຽກງານຕ່າງໆດັ່ງນີ້:

1. ຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 36 ຂອງຂໍ້ຕົກລົງສະບັບນີ້ 40%;
2. ການຄຸ້ມຄອງ ແລະ ບໍລິຫານຕົວເມືອງຫ້ອຍຊາຍ 20%;
3. ການບໍລິຫານ ແລະ ພັດທະນາດ້ານຕ່າງໆ ພາຍໃນບ້ານ 20%;
4. ການຕິດຕາມກວດກາ ແລະ ຊຸກຍູ້ວຽກຄຸ້ມຄອງຕົວເມືອງຫ້ອຍຊາຍ 20%.

**ມາດຕາ 39 ການຄຸ້ມຄອງກອງທຶນ**

ການຄຸ້ມຄອງກອງທຶນ ຕ້ອງຈັດຕັ້ງປະຕິບັດດັ່ງນີ້:

1. ແຕ່ງຕັ້ງຜູ້ຮັບຜິດຊອບກອງທຶນ;
2. ສ້າງແຜນການນຳໃຊ້ກອງທຶນ;
3. ສະຫຼຸບລາຍງານການນຳໃຊ້ກອງທຶນ.

## ໝວດທີ 8
## ຂໍ້ຫ້າມ

**ມາດຕາ 40 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ປ່ອຍຊະຊາຍຕາມຫ້ອງຖະໜົນຫົນທາງ ແລະ ເຂດສາທາລະນະ, ເຊິ່ງເປັນການລົບກວນຜູ້ອື່ນ, ສ້າງຄວາມເປິະເປື້ອນ ແລະ ກີດຂວາງການສັນຈອນພາໃຫ້ເກີດອຸປະຕິເຫດ;

2. ທັບມ້າງ ທຳລາຍຊັບສົມບັດສາທາລະນະເຊັ່ນ ໄຟເບືອງທາງ, ໄຟສອນສາທາລະນະ, ປ້າຍຈະລາຈອນ, ຫຼັກລາຍຫຼັກກັນຕົກ, ໂຖດອກໄມ້, ຕົ້ນໄມ້ທີ່ທາງການປູກໄວ້ ແລະ ອື່ນໆ;

3. ຈອດລົດຢູ່ເທິງຝາປິດຮ່ອງລະບາຍນ້ຳແຄມທາງ, ທາງຄົນຍ່າງ; ນຳໃຊ້ເສັ້ນທາງ, ແຄມທາງເປັນບ່ອນລ້າງລົດ, ເປັນບ່ອນຈອດລົດຖາວອນ; ລະເມີດກົດລະບຽບຈະລາຈອນ, ຂັບລົດໃນເວລາມຶນເມົາ, ດັດແປງສະພາບລົດໃຫ້ມີສຽງດັງເກີນປົກກະຕິ ແລະ ແລ່ນລົດໄວເກີນກຳນົດ;

4. ຈັດສັນດິນປຸກສ້າງຢູ່ເຂດປ່າສະຫງວນແຄມບ້ານ, ຍອດຫ້ວຍ, ແຫຼ່ງນ້ຳໃຫ້ບຸກຄົນຄຸ້ມຄອງໂດຍບໍ່ໄດ້ຮັບອະນຸຍາດ;

5. ປຸກສ້າງທຸກກໍລະນີຢູ່ໃນເຂດຂຽວ, ເຂດສະຫງວນ ແລະ ເຂດຫວງຫ້າມ ທີ່ແຂວງໄດ້ກໍານົດໄວ້;

6. ຂົນສົ່ງ ຫຼື ຕ່າງວັດສະດຸ, ອຸປະກອນທີ່ມີນໍ້າໜັກເກີນກວ່າທີ່ໄດ້ຮັບອະນຸຍາດຕາມລະບຽບຈາລະຈອນ ຕາມການກໍານົດເສັ້ນທາງສາຍຕ່າງໆໃນຕົວເມືອງທີ່ມີປ້າຍຫ້າມ ແລະ ນໍາເອົາລົດພວງຂະໜາດໃຫຍ່ແລ່ນເຂົ້າມາຄ່ຽນຖ່າຍວັດສະດຸກໍ່ສ້າງຕາມເສັ້ນທາງ, ຂົວ ແລະ ຮ້ານຈໍາໜ່າຍວັດສະດຸຢູ່ໃນຕົວເມືອງ (ເທດສະບານ);

7. ແລ່ນລົດບັນທຸກທີ່ຕິນລົດຕິດຂີ້ຕົມ, ຂີ້ດິນ ເຂົ້າຢຽບເສັ້ນທາງປູຢາງຢູ່ພາຍໃນເທດສະບານຕົວເມືອງຫ້ອຍຊາຍຢ່າງເດັດຂາດ;

8. ຖິ້ມຂີ້ເຫຍື້ອໃສ່ເສັ້ນທາງ ແລະ ຮ່ອງລະບາຍນໍ້າຢ່າງເດັດຂາດ.

9. ກາງເຕັ້ນ, ຂາຍເຄື່ອງທຸກຊະນິດໃສ່ສະຖານທີ່ສາທາລະນະໂດຍບໍ່ໄດ້ຮັບອະນຸຍາດ ເຊັ່ນແຄມຖະໜົນ, ເຂດທາງຍ່າງ, ໜ້າສໍານັກງານຫ້ອງການ ແລະ ສະຖານທີ່ອື່ນ ເພື່ອຈັດງານບຸນທາງດ້ານວັດທະນາທໍາ, ຮີດຄອງປະເພນີ ແລະ ງານສັງຄົມຂອງບຸກຄົນ ຫຼື ການຈັດຕັ້ງເປັນບ່ອນມ່ວນຊື່ນ ຫຼື ທໍາພິທີການຕ່າງໆ;

10. ຖອກ, ກອງດິນ, ຫີນ, ແຮ່, ຊາຍ, ໄມ້, ເຫຼັກເສັ້ນ ແລະ ວັດສະດຸອື່ນໆໃສ່ສະຖານທີ່ສາທາລະນະ ເຊັ່ນ ແຄມທາງລົດ, ບ່າທາງ, ທາງຍ່າງ ແລະ ສະຖານທີ່ຫ່ວງຫ້າມອື່ນໆ ຊຶ່ງເປັນການກີດຂວາງການສັນຈອນ;

11. ປຸກສ້າງທຸກກິດຈະການຢູ່ເຂດຂຽວ, ເຂດສະຫງວນ, ເຂດຫວງຫ້າມ ແລະ ຫ້ວຍຮ່ອງທໍາມະຊາດ, ຂຸດດິນ ແລະ ຖົມດິນແຄມທາງ, ບ່າທາງ ຢູ່ໃນຂອບເຂດສະຫງວນໂດຍບໍ່ໄດ້ຮັບອະນຸຍາດ;

12. ຕັ້ງຮ້ານຄະລາໂອເກະ, ຮ້ານກິນດື່ມຢູ່ໃກ້ສະຖານທີ່ໂຮງຮຽນ, ໂຮງໝໍ ແລະ ວັດຢ່າງເດັດຂາດ.

13. ຊຸມແຊວ, ຈັດງານສັງສັນ ແລະ ງານລ້ຽງອື່ນ ຢູ່ພາຍໃນຕົວເມືອງກາຍ 23:30 ໂມງຂອງທຸກໆວັນ;

14. ນໍາໃຊ້ຢາຂ້າຫຍ້າ, ຂ້າແມງໄມ້ຢູ່ຕາມສວນ, ເດີ່ນບ້ານ, ສະຖານທີ່ສໍານັກງານ, ໂຮງຮຽນ, ໂຮງໝໍ ແລະ ແຄມຖະໜົນຫົນທາງ ທີ່ເປັນຜົນກະທົບຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ.

**ມາດຕາ 41 ຂໍ້ຫ້າມສໍາລັບພະນັກງານຄຸ້ມຄອງຕົວເມືອງ**

ຫ້າມພະນັກງານຄຸ້ມຄອງຕົວເມືອງ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນທຸລະກິດໂດຍການເປັນເຈົ້າຂອງ, ເປັນອໍານວຍການ, ເປັນຂາຮຸ້ນ, ເປັນຜູ້ຈັດການຂອງຫົວໜ່ວຍທຸລະກິດ ທີ່ຕິດພັນກັບໜ້າທີ່ຄວາມຮັບຜິດຊອບຂອງຕົນ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ;

2. ສວຍໃຊ້ສິດອໍານາດ, ຖານະຕໍາແໜ່ງ, ໜ້າທີ່ຂອງຕົນ ເພື່ອຜົນປະໂຫຍດສ່ວນຕົວ;

3. ຕົວະຍົວະລອກລວງປະຊາຊົນ, ເອົາເງິນນໍາປະຊາຊົນແບບບໍ່ມີເຫດຜົນ;

4. ເກັບເງິນເກີນລາຄາທາງການອະນຸຍາດ, ລັກເກັບເງິນເອົາເອງບໍ່ມອບເຂົ້າລັດ ແລະ ໃຊ້ຈ່າຍເງິນທີ່ໄດ້ຈາກການປັບໃໝທຸກກໍລະນີ ໂດຍບໍ່ໄດ້ຮັບອະນຸຍາດ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 42 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ;

**ມາດຕາ 43 ມາດຕະການຕໍ່ຜູ້ລະເມີດ**

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ລ້ຽງສັດປະເພດຕ່າງໆ ຢູ່ໃນຕົວເມືອງຫ້ວຍຊາຍ ໂດຍບໍ່ຄຸ້ມຄອງປົກປັກຮັກສາປ່ອຍຊະຊາຍຕາມຫ້ອງຖະໜົນຫົນທາງ ແລະ ເຂດສາທາລະນະ, ສ້າງຄວາມເປິະເປື້ອນ, ສິ່ງກິ່ນເໝັນກະທົບຕໍ່ຜູ້ອື່ນ ແລະ ສິ່ງແວດລ້ອມ, ກີດຂວາງການສັນຈອນພາໃຫ້ເກີດອຸປະຕິເຫດ ຕ້ອງໄດ້ຮັບຜິດຊອບຕໍ່ເຫດການທຸກຢ່າງທີ່ເກີດຂຶ້ນ ຫຼື ຖືກດຳເນີນຄະດີຕາມກົດໝາຍ.

2. ບຸກຄົນໃດຫາກໄດ້ທຳລາຍຊັບສິນບັດສາທາລະນະ ເຊັ່ນ ໄຟເຍືອງທາງ,ໄຟສວນສາທາລະນະ, ປ້າຍຈະລາຈອນ, ຫຼັກລາຍຫຼັກກັນຕົກ, ໂຖດອກໄມ້, ຕົ້ນໄມ້ທີ່ທາງການປູກໄວ້ ແລະ ອື່ນ ຕ້ອງໄດ້ຮັບຜິດຊອບທົດແທນຄ່າເສຍຫາຍທັງໝົດ ແລະ ຖືກດຳເນີນຄະດີຕາມກົດໝາຍ.

3. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ຈອດລົດຢູ່ເທິງຝາປິດຮ່ອງລະບາຍນ້ຳແຄມທາງ, ທາງຄົນຍ່າງ, ໃຊ້ແຄມທາງເປັນບ່ອນລ້າງລົດ, ເປັນບ່ອນຈອດລົດຖາວອນ ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ຄັ້ງທີ 1 ປັບໃໝ 50.000 ກີບ, ເຮັດບົດບັນທຶກ;
- ຄັ້ງທີ 2 ປັບໃໝ 200.000 ກີບ ແລະ ດຳເນີນຄະດີຕາມລະບຽບກົດໝາຍ.

2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ປຸກສ້າງກິດຈະການຕ່າງໆ ຢູ່ໃເຂດຂຽວ, ເຂດສະຫງວນ ແລະ ເຂດຫວງຫ້າມໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ຕ້ອງຮື້ຖອນສິ່ງປຸກສ້າງນັ້ນອອກຈາກເຂດດັ່ງກ່າວ ພ້ອມທັງໃຊ້ແທນຄ່າເສຍຫາຍທັງໝົດທີ່ເກີດຂຶ້ນ ຫຼື ຖືກດຳເນີນຕາມກົດໝາຍ.

3. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ທີ່ເອົາຂີ້ເຫຍື້ອໄປຖິ້ມດ້ອຍຕົນເອງ, ເຮັດຂີ້ເຫຍື້ອຕົກເຮ່ຍໃສ່ເສັ້ນທາງ ຫຼື ໄປຖິ້ມໃສ່ຕາມແຄມທາງ ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ຄັ້ງທີ 1 ເຮັດບົດບັນທຶກ, ປັບໃໝ 50.000 ກີບ ພ້ອມທັງອະນາໄມຄືນໃຫ້ສະອາດ;
- ຄັ້ງທີ 2 ປັບໃໝ 200.000 ກີບ ອະນາໄມຄືນໃຫ້ສະອາດ.

6. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ຖິ້ມຂີ້ເຫຍື້ອຕາມສະຖານທີ່ຕ່າງໆ ພາຍໃນຕົວເມືອງເຊັ່ນ: ເສັ້ນທາງ, ປ່າທາງ, ແຄມທາງ, ດິນເປົ່າຫວ່າງ, ສະຖານທີ່ສາທາລະນະ, ສະຖານທີ່ບໍລິການຄ້າຂາຍ, ສະຖານທີ່ມີການຈັດງານຕ່າງໆ, ຮ່ອງລະບາຍນ້ຳ, ນ້ຳຫ້ວຍ, ແມ່ນ້ຳຂອງ ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ຄັ້ງທີ 1 ເຮັດບົດບັນທຶກ, ປັບໃໝ 100.000 ກີບ ພ້ອມທັງອະນາໄມຄືນໃຫ້ສະອາດ;
- ຄັ້ງທີ 2 ປັບໃໝ 300.000 ກີບ ອະນາໄມຄືນໃຫ້ສະອາດ.

7. ບຸກຄົນ, ນິຕິບຸກຄົນໃດ ຫາກໄດ້ຖິ້ມຂີ້ເຫຍື້ອອອກຈາກຍານພາຫະນະໃນເວລາລົດແລ່ນ

ແລະ ຈອດລົດຕາມເສັ້ນທາງ ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ຄັ້ງທີ 1 ປັບໃໝ 50.000 ກີບ ພ້ອມທັງອະນາໄມຄືນໃຫ້ສະອາດ;
- ຄັ້ງທີ 2 ປັບໃໝ 200.000 ກີບ ພ້ອມທັງອະນາໄມຄືນໃຫ້ສະອາດ, ຍຶດໃບຂັບຂີ່ ແລະ ເອກະສານລົດ.

8. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ຈູດເຜົາຂີ້ເຫຍື້ອ ຫຼື ສິ່ງເສດເຫລືອຢູ່ໃນຕົວເມືອງ, ເຂດຊຸມຊົນ, ຢູ່ຕາມໂຮງຈັກໂຮງງານ, ຕະຫຼາດ, ໂຮງຮຽນ, ໂຮງໝໍ, ບ້ານ, ແຄມທາງ ແລະ ສະຖານທີ່ອື່ນ ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ;
- ຄັ້ງທີ 2 ປັບໃໝ 200.000 ກີບ, ເຮັດບົດບັນທຶກ;
- ຄັ້ງທີ 3 ປັບໃໝ 500.000 ກີບ ຫຼືຖືກດໍາເນີນຄະດີຕາມກົດໝາຍ.

9. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ປ່ອຍນໍ້າເປື້ອນ, ນໍ້າເສຍໂດຍບໍ່ໄດ້ບໍາບັດຂ້າເຊື້ອ ແລະ ດັບກິ່ນ ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ;
- ຄັ້ງທີ 2 ປັບໃໝ 500.000 ກີບ, ຖ້າດໍາເນີນທຸລະກິດຈະຖືກຍຶດໃບທະບຽນດໍາເນີນທຸລະກິດ, ປິດກິດຈະການຊົ່ວຄາວ;
- ຄັ້ງທີ 3 ປັບໃໝ 1.000.000 ກີບ, ປິດກິດຈະການຖາວອນ ຫຼື ຖືກດໍາເນີນຄະດີຕາມກົດໝາຍ.

10. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ໃຊ້ສານເຄມີຢາຂ້າຫຍ້າ, ຂ້າແມງໄມ້ຢູ່ໃນຕົວເມືອງ ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ;
- ຄັ້ງທີ 2 ປັບໃໝ 500.000 ກີບ, ຜູ້ລະເມີດຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທັງໝົດ;
- ຄັ້ງທີ 3 ປັບໃໝ 1.000.000 ກີບ, ຮັບຜິດຊອບຕໍ່ຜົນເສັຍຫາຍທັງໝົດ ຫຼື ຖືກດໍາເນີນຄະດີຕາມກົດໝາຍ.

11. ໂຮງຈັກ, ໂຮງງານ, ຜູ້ປະກອບການໃດດໍາເນີນທຸລະກິດການສ້ອມແປງພາຫະນະ, ຈອດໂລຫະ, ເຄາະຈອດ, ພົ່ນສີ, ສະຖານທີ່ບັນເທີງ, ຮ້ານອາຫານ ຫາກເຮັດໃຫ້ເກີດມີສຽງເນື່ອງນັນ, ກິ່ນຂີວເໝັນເກີນມາດຕະຖານທີ່ກໍານົດ ພາໃຫ້ມີຜົນກະທົບຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມອ້ອມ ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ;
- ຄັ້ງທີ 2 ປັບໃໝ 200.000 ກີບ, ຍ້າຍອອກໄປຕັ້ງບ່ອນໃໝ່ທີ່ມີຄວາມເໝາະສົມ, ຮັບຜິດຊອບຕໍ່ຜົນເສຍຫາຍທັງໝົດ ແລະ ປິດກິດຈະການຊົ່ວຄາວ;
- ຄັ້ງທີ 3 ປັບໃໝ 1.000.000 ກີບ, ປິດກິດຈະການຖາວອນ ແລະ ຮັບຜິດຊອບຕໍ່ຄ່າເສຍຫາຍທີ່ເກີນໄດ້ກໍ່ຂຶ້ນ.

12. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ແລ່ນລົດບັນທຸກທີ່ເຮັດລົດຕິດຂີ້ດິນ, ຂີ້ດິນເຂົ້າປຽບເສັ້ນທາງປູຢາງຢູ່ພາຍໃນຕົວເມືອງຫ້ອຍຊາຍ (ເທດສະບານ) ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ, ອະນາໄມຄືນໃຫ້ສະອາດ;

- ຄັ້ງທີ 2 ປັບໃໝ 50,000 ກີບ/ແມັດຍາວ/ຄັນ/ຄັ້ງ, ອະນາໄມຄືນ ແລະ ສ້າງບົດບັນທຶກໄວ້;
- ຄັ້ງທີ 3 ຈະຖືກປັບໃໝ 100,000 ກີບ/ແມັດຍາວ/ຄັນ/ຄັ້ງ, ອະນາໄມຄືນ ຫຼື ລົງໂທດຕາມກົດໝາຍ.

13. ສໍານັກງານອົງການ, ບໍລິສັດ, ຫ້າງຮ້ານ, ເຮືອນຂອງບຸກຄົນ ທີ່ຢູ່ຕິດກັບເສັ້ນທາງຫຼວງ, ທາງຊອຍ ແລະ ມີຮ່ອງລະບາຍນໍ້າ ບໍ່ອະນາໄມໃນຂອບເຂດຄວາມຮັບຜິດຊອບຕອນດິນຂອງຕົນ ຈະຖືກປະຕິບັດມາດຕະການ ດັ່ງນີ້:
- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກໄວ້ເປັນຫຼັກຖານ ແລະ ອະນາໄມຄືນ;
- ຄັ້ງທີ 2 ປັບໃໝ 50,000 ກີບ, ເຮັດບົດບັນທຶກຮ່ວມກັບອົງການປົກຄອງບ້ານ, ອະນາໄມຄືນ;
- ຄັ້ງທີ 3 ປັບໃໝ 100,000 ກີບ, ເຮັດບົດບັນທຶກຮ່ວມກັບອົງການປົກຄອງບ້ານ, ອະນາໄມຄືນ ແລະ ອອກຂ່າວທາງສື່ມວນຊົນ;

14. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ກາງເຕັ້ນ, ຂາຍເຄື່ອງໃສ່ສະຖານທີ່ສາທາລະນະ ເຊັ່ນ ແຄມຖະໜົນ, ເຂດທາງຍ່າງ, ໜ້າສໍານັກງານຫ້ອງການ ແລະ ສະຖານທີ່ອື່ນ ເພື່ອຈັດງານຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປະຕິບັດມາດຕະການ ດັ່ງນີ້:
- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນໃຫ້ຢຸດເຊົາ ແລະ ເຮັດບົດບັນທຶກໄວ້ເພື່ອເປັນຫຼັກຖານ;
- ຄັ້ງທີ 2 ປັບໃໝ 100.000 ກີບ ພ້ອມທັງຍຶດເອົາໂຕະ, ຕັ່ງ ແລະ ເຄື່ອງທີ່ວາງຂາຍນັ້ນໄປໄວ້ຫ້ອງການຂອງເຈົ້າໜ້າທີ່ແລ້ວຈຶ່ງຄ່ອຍໄປໄກ່ເກັ່ຍຕາມທີ່ຫຼັງ;
- ຄັ້ງທີ 3 ປັບໃໝ 200.000 ກີບ ພ້ອມທັງຍຶດເອົາໂຕະ, ຕັ່ງ ແລະ ເຄື່ອງ ໄວ້ເປັນຂອງລັດ ພ້ອມທັງລົງຂ່າວສື່ມວນຊົນ.

15. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ທີ່ມີຕອນດິນເປົ່າຫວ່າງ ຫຼື ສິ່ງກໍ່ສ້າງຢູ່ແຄມທາງ ຫຼື ຢູ່ໃນຕົວເມືອງຫ້ອຍຊາຍ ບໍ່ປົກປັກຮັກສາ, ບໍ່ອະນາໄມ ປະໄວ້ເຮັດໃຫ້ເປິະເປື້ອນ, ຮົກເຮື້ອ,ຈະຖືກປະຕິບັດມາດຕະການ ດັ່ງນີ້:
- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກໄວ້ເພື່ອເປັນຫຼັກຖານ;
- ຄັ້ງທີ 2 ປັບໃໝ 100,000 ກີບ ແລະ ຂຽນບົດບັນທຶກໄວ້ເພື່ອເປັນຫຼັກຖານ;
- ຄັ້ງທີ 3 ປັບໃໝ 200,000 ກີບ, ເຮັດບົດບັນທຶກໄວ້ເພື່ອເປັນຫຼັກຖານ ແລະ ອອກຂ່າວທາງສື່ມວນຊົນ.

16. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ຖອກກອງດິນ, ຫີນ, ແຮ່, ຊາຍ, ໄມ້, ເຫຼັກເສັ້ນ ແລະ ວັດສະດຸໃສ່ສະຖານທີ່ສາທາລະນະ ເຊັ່ນ ແຄມທາງລົດ, ບ່າທາງ, ທາງຍ່າງ ແລະ ສະຖານທີ່ຫ້າມ, ກີດຂວາງຜູ້ອື່ນ, ກີດຂວາງການສັນຈອນ ຈະຖືກປະຕິບັດມາດຕະການ ຄື:
- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ ແລະ ໃຫ້ຂົນຍ້າຍອອກພາຍໃນ 1 ວັນ ຫຼື 24 ຊົ່ວໂມງ;
- ຄັ້ງທີ 2 ປັບໃໝ 50,000 ກີບ/ວັນ ແລະ ໃຫ້ຍົກຍ້າຍອອກພາຍໃນ 24 ຊົ່ວໂມງ;
- ຄັ້ງທີ 3 ປັບໃໝ 100,000 ກີບ/ວັນ ແລະ ໃຫ້ຍົກຍ້າຍອອກພາຍໃນ 24 ຊົ່ວໂມງ, ພ້ອມທັງອອກຂ່າວທາງສື່ມວນຊົນ.

17. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດທີ່ໄດ້ຮັບເໝົາກໍ່ສ້າງ ແລະ ສ້ອມແປງກິດຈະການໃດໜຶ່ງໂດຍບໍ່ມີໃບອະນຸຍາດປຸກສ້າງ ຈະຖືກປັບໃໝ 10% ຂອງມູນຄ່າການກໍ່ສ້າງ

ກໍລະນີຜູ້ຮັບເໝົາກໍ່ສ້າງບໍ່ມີໃບອະນຸຍາດດໍາເນີນທຸລະກິດກໍ່ສ້າງ ຫຼື ນໍາໃຊ້ໃບອະນຸຍາດຂອງຜູ້ອື່ນ ຈະຖືກປັບໃໝ 15% ຂອງມູນຄ່າກໍ່ສ້າງທັງໝົດ, ທັງປິດໃບອະນຸຍາດດໍາເນີນທຸລະກິດກໍ່ສ້າງ.

18. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ຈົກດິນ, ຖົມດິນ ແລະ ຂົນຍ້າຍດິນ ໂດຍບໍ່ໄດ້ຮັບອະນຸຍາດ, ຂົນສົ່ງດິນເຮັດໃຫ້ດິນຕົກເຮ່ຍໃສ່ເສັ້ນທາງ, ເຮັດໃຫ້ເສັ້ນທາງເປ່ເພເສຍຫາຍ ແລະ ສ້າງສິ່ງເປື້ອນເປິະໃສ່ເສັ້ນທາງ ຈະຖືກປັບໃໝແຕ່ 100.000 ກີບ ຫາ 300.000 ກີບ ພ້ອມທັງໃຫ້ອະນາໄມເສັ້ນທາງໃຫ້ມີຄວາມສະອາດ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 44 ການຈັດຕັ້ງປະຕິບັດ**

ຄະນະຮັບຜິດຊອບຄຸ້ມຄອງຕົວເມືອງ ເປັນເຈົ້າການໃນການຈັດຕັ້ງປະຕິບັດໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ລົງເຜີຍແຜ່ຂໍ້ຕົກລົງສະບັບນີ້ຢ່າງທົ່ວເຖິງທຸກບ້ານພາຍໃນຕົວເມືອງ;

ໃຫ້ແຕ່ງຕັ້ງຄະນະຮັບຜິດຊອບກວດກາຄຸ້ມຄອງຕົວເມືອງ ເພື່ອຕິດຕາມ ແລະ ກວດກາປະເມີນຜົນແຕ່ລະກິດຈະການໃນແຕ່ລະໄລຍະ ເພື່ອນໍາເອົາຜົນກວດກາ ແລະ ການປະເມີນຜົນເພື່ອລາຍງານໃຫ້ແຂວງ.

**ມາດຕາ 45 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

ຂໍ້ກໍານົດ, ບົດບັນຍັດໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ເຈົ້າແຂວງ ແຂວງບໍ່ແກ້ວ**

**ປອ ຄໍາພັນ ເຜີຍຍະວົງ**